ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---------------------------

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມນໍ້າປະປາ

ເລກທີ 570 /ກນປ
ນະຄອນຫລວງວຽງຈັນ, ວັນທີ 12 ຕຸລາ 2023

# ໜັງສືແຈ້ງເຊີນປະມູນ

**ຊື່ຂອງໂຄງການ** : **ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ.**

**ຊື່ຂອງສັນຍາ: ສ້ອມແປງຫ້ອງການເຮັດວຽກຂອງໜ່ວຍງານຄຸ້ມຄອງໂຄງການ (PMU) ຊັ້ນ 4 ຕຶກ ສະຖາບັນ ໂຍທາທິການ ແລະ ຂົນສົ່ງ (ຖະໜົນດົງປາລານ)**

**ເງິນກູ້ຢືມ ເລກທີ.: WB Cr-6375-LA**

**ເລກທີອ້າງອີງ.: C1/W/09**

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບເງິນກູ້ຢືມ ຈາກທະນາຄານໂລກ ເພື່ອໃຊ້ຈ່າຍສໍາລັບ ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ, ແລະ ມີຈຸດປະສົງນໍາໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາ ສ້ອມແປງຫ້ອງການເຮັດວຽກຂອງໜ່ວຍງານຄຸ້ມຄອງໂຄງການ (PMU) ຊັ້ນ 4 ຕຶກສະຖາບັນໂຍທາທິການ ແລະ ຂົນສົ່ງ.
2. ກົມນໍ້າປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ, ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ເຂົ້າຍື່ນຊອງປະມູນສໍາລັບສ້ອມແປງຫ້ອງການໜ່ວຍງານຄຸ້ມຄອງ ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອຂອງ ສປປ ລາວ ທີ່ສະຖາບັນໂຍທາທິການ ແລະ ຂົນສົ່ງ (ຖະໜົນດົງປາລານ), ໄລຍະການສ້ອມແປງ ແລະ ປັບປຸງຫ້ອງການແມ່ນ 3 ເດືອນ ຫຼື 90 ວັນ ພາຍຫຼັງເຊັນສັນຍາ.
    - ຄວາມອາດສາມາດດ້ານການເງິນ 16,000 ໂດລາສະຫະລັດ.
    - ລາຍຮັບສະເລ່ຍປະຈໍາປີ (ພາຍໃນ 3 ປີ 2017, 2018 ແລະ 2019) 96,000 ໂດລາສະຫະລັດ.
    - ປະສົບການສະເພາະວຽກສ້ອມແປງ ແລະ ກໍ່ສ້າງຜ່ານມາ (ພາຍໃນ 5 ປີ) ຢ່າງໜ້ອຍ ຈໍານວນ 1 ສັນຍາ ມູນຄ່າໜ້ອຍສຸດ 64,000 ໂດລາສະຫະລັດ.
3. ຜູ້ປະມູນ ສາມາດສະເໜີຫຼຸດລາຄາການປະມູນໄດ້ ຕາມທີ່ໄດ້ລະບຸໄວ້ ໃນເອກະສານປະມູນ, ແຕ່ການສະເໜີຂໍຫຼຸດລາຄານັ້ນຕ້ອງໄດ້ນໍາໃຊ້ແບບຟອມ ໃນເອກະສານປະມູນ ແລະ ຍື່ນພ້ອມ ກັນກັບຊຸດເອກະສານປະມູນ.
4. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ຕາມທີ່ໄດ້ລະບຸໄວ້ໃນຄູ່ມື ແນະນໍາຂອງທະນາຄານໂລກວ່າດ້ວຍ: ການຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະ ການບໍລິການ ທີ່ບໍ່ແມ່ນດ້ານທີ່ປຶກສາ, ພາຍໃຕ້ການກູ້ຢືມເງິນ IDA ຈາກທະນາຄານ ("ຄູ່ມືການຈັດຊື້-ຈັດຈ້າງ"), ແລະ ເປີດໃຫ້ຜູ້ປະມູນທຸກໆຄົນຕາມທີ່ໄດ້ລະບຸໄວ້ໃນປຶ້ມຄູ່ມືຈັດຊື້-ຈັດຈ້າງ. ພ້ອມກັນນັ້ນ, ໃຫ້ເບິ່ງ ຂໍ້ແນະນໍາສໍາລັບຜູ້ປະມູນຂໍ້ ITB 4.3 ທີ່ກໍານົດໄວ້ໃນນະໂຍບາຍຂອງທະນາຄານໂລກວ່າດ້ວຍການຂັດແຍ່ງທາງດ້ານຜົນປະໂຫຍດ.
5. ບໍລິສັດທີ່ມີຄວາມສົນໃຈ ສະເໜີສົ່ງອີເມວມາສອບຖາມ ແລະ ຈະໄດ້ຮັບຂໍ້ມູນຈາກ ໜ່ວຍງານຄຸ້ມຄອງໂຄງການ ຂອງໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອຂອງ ສປປ ລາວ ທີ່ຂຶ້ນກັບ ກົມນໍ້າປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ ຕາມທີ່ຢູ່ຂ້າງລຸ່ມນີ້ ໃນໂມງລັດຖະການ (ເວລາ 08:00 ຫາ 12:00 ໂມງ ແລະ 13:00 ຫາ 16:00 ໂມງ).

6. ບໍລິສັດທີ່ມີຄວາມສົນໃຈ ສາມາດຮັບເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ, ຖະໜົນດົງປາລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ.
7. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມນໍ້າປະປາ, ໂຄງການຂະຫຍາຍນໍ້າປະປາ ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ. ຖະໜົນດົງປາລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ ກ່ອນເວລາ 14:00 ໂມງ ໃນວັນທີ 26 ຕຸລາ 2023. ການສົ່ງດ້ວຍລະບົບເອເລັກໂຕຼນິກ ຈະບໍ່ອະນຸຍາດ. ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການປະມູນຈະເປີດຕໍ່ສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.
8. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນດ້ວຍກຽດ.
9. ສະຖານທີ່ຍື່ນຊອງປະມູນ:

ຫ້ອງການໜ່ວຍງານຄຸ້ມຄອງ ໂຄງການຂະຫຍາຍນໍ້າປະປາ, ສຸຂາພິບານ ແລະ ອານາໄມ ຢູ່ 4 ແຂວງພາກເໜືອ
ຂອງ ສປປ ລາວ.
ຖະໜົນດົງປາລານ, ບ້ານໂພນສີນວນ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທລະສັບ : +856 21 452167 ; ອີເມວ: swsshp.procurement@gmail.com
ທ່ານ ຈັນເທພາ ຂັດຕິຍະວົງ, ຫົວໜ້າໂຄງການ

**ຫົວໜ້າກົມ**

ສົມປອງ ສິດທິວົງ